ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 08 ຫາ 12 ກໍລະກົດ 2024



ກະຊວງກະສິກຳ ແລະ ປ່າໄມ້ ສະເໜີສ້າງກົດໝາຍວ່າດ້ວຍສະຫະກອນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ກະຊວງ ກະສິກຳ ແລະ ປ່າໄມ້ ສະເໜີ ສ້າງກົດໝາຍ ວ່າດ້ວຍສະຫະກອນ

ພາບ-ຂ່າວ ໂດຍ: ສຸກສະຫວັນ, ໜັງສືພິມປະຊາຊົນ

ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງ ສະພາແຫ່ງຊາດ ຊຸດທີ IX ໃນວັນທີ 19 ມິຖຸນາ ນີ້ ໂດຍການເປັນປະທານຂອງ ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ (ກປ) ໄດ້ຂຶ້ນສະເໜີຮ່າງກົດໝາຍວ່າດ້ວຍ ສະຫະກອນ ຊຶ່ງເປັນກົດໝາຍສ້າງໃໝ່.

ທ່ານລັດຖະມົນຕີກະຊວງ ກປ ກ່າວວ່າ: ໃນການຈັດຕັ້ງປະຕິບັດ ແນວທາງປ່ຽນແປງໃໝ່, ພັກ-ລັດ ໄດ້ຖືເອົາວຽກງານການຈັດຕັ້ງການຜະລິດ ເປັນວຽກສຳຄັນ ເພື່ອເຕົ້າໂຮມການຜະລິດນ້ອຍ ເອກະເທດ ກະແຈກກະຈາຍມາຈັດຕັ້ງເປັນກຸ່ມ, ເປັນສະຫະກອນ ຊຶ່ງລັດຖະບານ ໄດ້ອອກດຳລັດ ວ່າດ້ວຍ ສະຫະກອນ ໃນປີ 2010 ແລະ ດຳລັດວ່າດ້ວຍ ກຸ່ມ ແລະ ສະຫະກອນ ໃນປີ 2020. ບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ຜັນຂະຫຍາຍ ນະໂຍບາຍ ແລະ ນິຕິກຳ ດັ່ງກ່າວ ເຮັດໃຫ້ບັນດາກຸ່ມການຜະລິດ, ກຸ່ມບໍລິການ, ກຸ່ມທັດຖະກຳ, ກຸ່ມອອມຊັບ ໄດ້ມີການຂະຫຍາຍຕົວດີພໍສົມຄວນ ມີເຖິງ 4.000 ກວ່າກຸ່ມ ແຕ່ການຂະຫຍາຍຕົວຂອງສະຫະກອນຕ່າງໆ ແມ່ນຍັງຊັກຊ້າຫຼາຍ ມີພຽງແຕ່ 73 ຫົວໜ່ວຍເທົ່ານັ້ນ; ໃນນັ້ນ, ສະຫະກອນກະສິກຳ ມີ 35 ຫົວໜ່ວຍ. ເພື່ອຍູ້ແຮງ ຂະບວນການຜະລິດຂອງພາກສ່ວນເສດຖະກິດລວມໝູ່ ກໍຄືສະຫະກອນ ຈຶ່ງມີຄວາມຈຳເປັນຕ້ອງ ໄດ້ລວບລວມເອົາບັນດານິຕິກຳທີ່ກ່ຽວຂ້ອງ ເພື່ອປະກອບໃສ່ ແລະ ຍົກດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ ເລກທີ 606/ລບ, ລົງວັນທີ 26 ພະຈິກ 2020 ຂຶ້ນເປັນກົດໝາຍ. ຈຸດປະສົງເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມກວດກາສະຫະກອນ ເພື່ອສົ່ງເສີມ ແລະ ພັດທະນາການຜະລິດ, ການບໍລິການ ແລະ ການດຳເນີນກິດຈະການ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ເຂັ້ມແຂງ ແນໃສ່ແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໃຫ້



ດີຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ຮ່າງກົດໝາຍວ່າດ້ວຍ ສະຫະກອນ ທີ່ຈະສ້າງຂຶ້ນໃໝ່ນີ້ ປະກອບມີ 12 ພາກ, 8 ໝວດ, 77 ມາດຕາ ຊຶ່ງພາຍຫຼັງກົດໝາຍສະບັບນີ້ ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ ຈະເຮັດໃຫ້ການຄຸ້ມຄອງວຽກງານສະຫະກອນ ລວມສູນ ແລະ ມີການຈັດຕັ້ງຮັບຜິດຊອບ ຢ່າງຈະແຈ້ງ ແລະ ທັນເຂົ້າສູ່ລະບຽບກົດ ໝາຍ ຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດວາງອອກ ທັງເປັນບ່ອນອີງໃຫ້ແກ່ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ; ມີຫຼັກການ, ຂັ້ນຕອນ ແລະ ເງື່ອນໄຂ ໃນການສ້າງຕັ້ງສະຫະກອນ ທີ່ຊັດເຈນ, ຈະແຈ້ງ ແລະ ມີຄວາມເປັນເອກະພາບກັນ ຊຶ່ງຈະເປັນການຍູ້ແຮງຂະບວນການຜະລິດເປັນສິນຄ້າ, ການບໍລິການ, ສ້າງວຽກເຮັດງານທຳ ເຮັດໃຫ້ຄອບຄົວມີລາຍຮັບ ແລະ ມີອາຊີບໝັ້ນຄົງ ດີຂຶ້ນເທື່ອລະກ້າວ; ມີກົນໄກການປະສານງານ, ມາດຕະການ, ວິທີການ, ມາດຕະຖານ, ເງື່ອນໄຂໃນການສ້າງຕັ້ງ ແລະ ສົ່ງເສີມສະຫະກອນ ທີ່ຊັດເຈນ, ຈະແຈ້ງ ແລະ ມີຄວາມເປັນເອກະພາບກັນໃນທົ່ວປະເທດ; ເຮັດໃຫ້ຜູ້ປະກອບການທຸລະກິດຂະໜາດນ້ອຍ, ກຸ່ມການຜະລິດ ແລະ ຊາວກະສິກອນ ມີຄວາມໝັ້ນໃຈໃນການເຕົ້າໂຮມກຳລັງແຮງງານ, ທຶນຮອນ ແລະ ເຕັກໂນໂລຊີ ເຂົ້າໃນການຈັດຕັ້ງການຜະລິດແບບເປັນກຸ່ມ ແລະ ສະຫະກອນ ຫຼືການຈັດຕັ້ງທຸລະກິດລວມໝູ່ຫຼາຍຂຶ້ນ, ເພີ່ມຂີດຄວາມສາມາດຂອງກຸ່ມ-ສະຫະກອນ ໃນການຕໍ່ລອງລາຄາ ແລະ ຕະຫຼາດ, ກຳລັງການຜະລິດ ຢູ່ຊົນນະບົດມີຄວາມເຂັ້ມແຂງຂຶ້ນ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການຍົກລະດັບ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍດີຂຶ້ນກວ່າ; ເປັນການສ້າງຄວາມເຊື່ອໝັ້ນ ແລະ ຍາດແຍ່ງການຊ່ວຍເຫຼືອ, ກູ້ຢືມຈາກຕ່າງປະເທດ, ອົງການຈັດຕັ້ງສາກົນຕ່າງໆ ເຂົ້າໃນວຽກງານດັ່ງກ່າວ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປາໄມ;